ລັດວິສາຫະກິດຖືຮຸ້ນລາວ

LAO HOLDING STATE ENTERPRISE

# ລາຍງານປະຈຳປີ

# ANNUAL REPORT

# 2018











www.laoholding.com

globalgroup ISO 9001

UKAS MANAGEMENT SYSTEMS 5965

Cert No. 63Q16125










globalgroup
United Kingdom

Certificate of Registration

*This is to certify that the*

**QUALITY MANAGEMENT SYSTEM**

*of*

**LAO HOLDING STATE ENTERPRISE**

P.D.R.

for

**Holding and Managing of Shares in Independent Power Producer (IPP) Projects and related Businesses. Sale and Distribution of Fly Ash.**

*has been assessed and registered against the provisions of*

**ISO 9001:2015**

*International Standard*

Chairman










# ສາລະບານ


| ເນື້ອໃນ | ໜ້າ |
|---|---|
| ບົດຄວາມຂອງທ່ານຜູ້ອຳນວຍການ | i |
| ພາລະບົດບາດ, ໜ້າທີ່, ວິໄສທັດ ແລະ ນະໂຍບາຍລວມຂອງ ລຣລ | 1 |
| 1. ພາລະບົດບາດ ແລະ ໜ້າທີ່ | 1 |
| 2. ວິໄສທັດ | 3 |
| 3. ນະໂຍບາຍລວມຂອງ ລຣລ | 3 |
| ເຫດການເດັ່ນ | 4 |
| ການລົງທຶນ ແລະ ຮ່ວມປະກອບການດ້ານທຸລະກິດ | 9 |
| ກິດຈະກຳການຈັດຕັ້ງຂອງ ລຣລ | 11 |
| ການຈັດຕັ້ງປະຕິບັດໂຄງການ | 14 |
| 1. ໂຄງການໄຟຟ້ານ້ຳເທີນ 2 | 14 |
| 2. ໂຄງການໄຟຟ້າຄວາມຮ້ອນຫົງສາ | 17 |
| 3. ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ | 20 |
| 4. ໂຄງການໄຟຟ້ານ້ຳງຽບ 1 | 23 |
| 5. ໂຄງການທຸລະກິດຂີ້ເທົ່າລອຍ | 25 |
| ການບໍລິຫານສັນຍາໂຄງການ | 25 |
| ການປະຕິບັດພັນທະຕາມກົດໝາຍ | 27 |
| ການບໍລິຫານລາຍຮັບ-ລາຍຈ່າຍ | 28 |
| ການພັດທະນາບຸກຄະລາກອນ ແລະ ອົງກອນ | 28 |
| ການປະກອບສ່ວນຊ່ວຍສັງຄົມ | 30 |
| ພາກສະຫຼຸບ | 31 |

# ບົດຄວາມຂອງທ່ານຜູ້ອຳນວຍການ



ໃນທ່າມກາງທີ່ວພັກ, ທີ່ວກອງທັບ ແລະ ທີ່ວປວງຊົນລາວ ໄດ້ພ້ອມກັນຈັດຕັ້ງປະຕິບັດເນື້ອໃນຈິດໃຈກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ຢ່າງຟົດຟື້ນ. ລັດວິສາຫະກິດຖືຮຸ້ນລາວ (ລຮລ) ກໍໄດ້ເອົາໃຈໃສ່ໃນການດຳເນີນທຸລະກິດຂອງຕົນຢ່າງຕັ້ງໜ້າ ແລະ ໄດ້ຮັບຜົນສຳເລັດ. ໃນປີ 2018 ຜ່ານມາ ລຮລ ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານໃນບັນດາໂຄງການທີ່ ລຮລ ຮ່ວມຖືຮຸ້ນ ແລະ ວຽກງານຕ່າງໆຕາມພາລະບົດບາດຂອງຕົນເຊັ່ນ: ການດຳເນີນການຜະລິດ, ການດຳເນີນການກໍ່ສ້າງ, ການບຳລຸງຮັກສາ, ການຄຸ້ມຄອງ ແລະ ບໍລິຫານໂຄງການຮ່ວມກັບບັນດາຂາຮຸ້ນຕ່າງປະເທດ, ການບໍລິຫານສັນຍາ, ການບໍລິຫານເງິນກູ້ເພື່ອປະກອບເປັນທຶນຮຸ້ນຂອງຕົນ, ການຕິດຕາມລາຍຮັບເງິນປັນຜົນ, ການດຳເນີນທຸລະກິດຂີ້ເທົ່າລອຍໃນໂຄງການໄຟຟ້າຄວາມຮ້ອນຫົງສາ, ການຄຸ້ມຄອງ ແລະ ບໍລິຫານລາຍຮັບ-ລາຍຈ່າຍ, ການມອບພັນທະຕ່າງໆ ລວມທັງການຊຳລະຕົ້ນທຶນ ແລະ ດອກເບັ້ຍໃຫ້ລັດຖະບານຕາມສັນຍາກູ້ຢືມຕໍ່ຈາກກະຊວງການເງິນ.

ປີ 2018 ລຮລ ດຳເນີນທຸລະກິດໄດ້ຮັບຜົນສຳເລັດດີສົມຄວນ, ຊຶ່ງມີລາຍຮັບ 35.513.789 ໂດລາສະຫະລັດ ຫຼື ທຽບເທົ່າ 303.003.463.622 ກີບ. ໃນນັ້ນ ໄດ້ມາຈາກເງິນປັນຜົນໂຄງການໄຟຟ້ານ້ຳເທີນ 2, ໂຄງການໄຟຟ້າຄວາມຮ້ອນຫົງສາ, ການຂາຍຂີ້ເທົ່າລອຍ, ການສະໜອງບຸກຄະລາກອນເພື່ອຮ່ວມປະຕິບັດງານໃນບັນດາໂຄງການທີ່ ລຮລ ຮ່ວມຖືຮຸ້ນ ແລະ ລາຍຮັບຈາກດອກເບັ້ຍເງິນຝາກທະນາຄານ. ລຮລ ມີຜົນກຳໄລ 8.947.555 ໂດລາສະຫະລັດ ຫຼື ທຽບເທົ່າ 76.340.538.787 ກີບ. ລຮລ ໄດ້ປະຕິບັດພັນທະຂອງຕົນຢ່າງຄົບຖ້ວນຕາມລະບຽບກົດໝາຍ ໂດຍໄດ້ມອບອາກອນເງິນປັນຜົນ ແລະ ອາກອນອື່ນໆໃຫ້ລັດຖະບານ 3.364.794 ໂດລາສະຫະລັດ. ການຊຳລະຕົ້ນທຶນ ແລະ ດອກເບັ້ຍໃຫ້ ກະຊວງການເງິນ ກໍສາມາດປະຕິບັດໄດ້ຕາມແຜນເວລາ. ລຮລ ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ບໍລິຫານລາຍຮັບ-ລາຍຈ່າຍຢ່າງມີປະສິດທິຜົນ ແລະ ມີຄວາມໂປ່ງໃສ ໂດຍໄດ້ມີການກວດສອບຈາກອົງການກວດສອບແຫ່ງລັດ, ບໍລິສັດກວດສອບພາຍນອກ ແລະ ການຕິດຕາມບົດລາຍງານການເງິນຈາກຜູ້ສະໜອງທຶນແກ່ ລຮລ ຢ່າງເປັນປະຈຳ.

ການຈັດຕັ້ງປະຕິບັດບັນດາໂຄງການທີ່ ລຮລ ຮ່ວມຖືຮຸ້ນກໍ່ໄດ້ຮັບການຕິດຕາມຢ່າງໃກ້ຊິດ ແລະ ມີຄວາມຄືບໜ້າດີ, ຊຶ່ງຮອດທ້າຍປີ 2018 ການກໍ່ສ້າງໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ປະຕິບັດໄດ້ 93.76% ແລະ ໂຄງການໄຟຟ້ານ້ຳງຽບ 1 ປະຕິບັດໄດ້ 98%. ສ່ວນການດຳເນີນທຸລະກິດຂີ້ເທົ່າລອຍແມ່ນດີຂຶ້ນ, ຊຶ່ງສາມາດຂາຍໄດ້ທັງໝົດ 320.480 ໂຕນ ເປັນເງິນ 1.325.267 ໂດລາສະຫະລັດ ລື່ນປີ 2017 ສາມເທົ່າຕົວ. ລຮລ ໄດ້ສຳເລັດການຫັນປ່ຽນຈາກລະບົບບໍລິຫານຄຸນະພາບ ISO 9001:2008

ມາເປັນລະບົບ ISO 9001:2015 ໂດຍໄດ້ຮັບໃບຢັ້ງຢືນຮັບຮອງຈາກບໍລິສັດ Global Group ປະເທດອັງກິດ ໃນວັນທີ 16/02/2018.

ສະຫຼຸບແລ້ວ, ການດຳເນີນທຸລະກິດຂອງ ລຮລ ໃນໄລຍະ 1 ປີຜ່ານມາແມ່ນໄດ້ຮັບຜົນສຳເລັດດີ. ຜົນສຳເລັດທີ່ບັນລຸໄດ້ນັ້ນ ແມ່ນຍ້ອນມີການຊີ້ນຳ-ນຳພາອັນສະຫຼາດສ່ອງໃສຂອງພັກ ແລະ ລັດຖະບານ ໂດຍສະເພາະແມ່ນການຊີ້ນຳຢ່າງໃກ້ຊິດຈາກກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ ແລະ ສະພາບໍລິຫານຂອງ ລຮລ ທີ່ໄດ້ເອົາໃຈໃສ່ຊຸກຍູ້ ແລະ ສະໜັບສະໜູນສົມທົບກັບການທຸ່ມເທເຫື່ອແຮງ ແລະ ສະຕິປັນຍາຂອງພະນັກງານທັງໝົດ ໃນການປະຕິບັດໜ້າທີ່ອັນມີກຽດຂອງຕົນດ້ວຍຄວາມຮັບຜິດຊອບສູງ.

**ຜູ້ອຳນວຍການ**



**ມານະສິນ ວົງໄຊ**




ລັດວິສາຫະກິດ
ຖືຮຸ້ນລາວ
LAO HOLDING
STATE ENTERPRISE
www.laoholding.com
SHB
Solid partners, flexible solutions
ລຮລ
LHSE
ລັດວິສາຫະກິດຖືຮຸ້ນລາວ
LAO HOLDING STATE ENTERPRISE

# ພາລະບົດບາດ, ໜ້າທີ່, ວິໄສທັດ ແລະ ນະໂຍບາຍລວມຂອງ ລຣລ

## 1. ພາລະບົດບາດ ແລະ ໜ້າທີ່

ລັດວິສາຫະກິດຖືຮຸ້ນລາວ (ລຣລ) ສ້າງຕັ້ງຂຶ້ນໃນວັນທີ 23 ກຸມພາ 2005 ເປັນຫົວໜ່ວຍທຸລະກິດໜຶ່ງທີ່ຂຶ້ນກັບກະຊວງພະລັງງານ ແລະ ບໍ່ແຮ່, ຊຶ່ງແມ່ນກະຊວງການເງິນເປັນເຈົ້າຂອງທຶນ 100% ເພື່ອເຂົ້າຮ່ວມຖືຮຸ້ນ, ຄຸ້ມຄອງ ແລະ ບໍລິຫານຮຸ້ນຂອງລັດຖະບານຢູ່ໃນບັນດາໂຄງການຜະລິດໄຟຟ້າ ເພື່ອການສົ່ງອອກຢ່າງມີປະສິດທິຜົນ ແລະ ເກີດຜົນຕອບແທນສູງສຸດ.

ປະຈຸບັນ ລຣລ ຕາງໜ້າໃຫ້ລັດຖະບານ ຮ່ວມລົງທຶນໃນ 4 ໂຄງການຄື: ໂຄງການໄຟຟ້ານໍ້າເທີນ 2 (ຖືຮຸ້ນ 25%); ໂຄງການໄຟຟ້າຄວາມຮ້ອນຫົງສາ (ຖືຮຸ້ນພາກໂຮງໄຟຟ້າ 20% ແລະ ພາກບໍ່ແຮ່ 25%), ໂຄງການໄຟຟ້າເຊປຽນ-ເຊນໍ້ານ້ອຍ (ຖືຮຸ້ນ 24%), ແລະ ໂຄງການໄຟຟ້ານໍ້າງຽບ 1 (ຖືຮຸ້ນ 25%). ລວມກໍາລັງຕິດຕັ້ງທັງໝົດປະມານ **3.658** ເມກາວັດ (MW) ແລະ ຜະລິດພະລັງງານໄຟຟ້າໄດ້ປະມານ **21.551** ລ້ານກິໂລວັດໂມງ (KWh) ຕໍ່ປີ, ມູນຄ່າກໍ່ສ້າງໂຄງການທັງໝົດປະມານ **6.933** ລ້ານໂດລາສະຫະລັດ. ໃນນັ້ນ, ທຶນຮຸ້ນຂອງ ລຣລ **536,64** ລ້ານໂດລາສະຫະລັດ. ພ້ອມດຽວກັນນີ້, ລຣລ ໄດ້ຮັບມອບໝາຍໃຫ້ດໍາເນີນທຸລະກິດຂີ້ເທົ່າລອຍທີ່ເກີດຈາກຂະບວນການເຜົາໄໝ້ຖ່ານຫີນ ເພື່ອຜະລິດກະແສໄຟຟ້າໃນໂຄງການໄຟຟ້າຄວາມຮ້ອນຫົງສາ.

### ຕາຕະລາງອັດຕາສ່ວນການຖືຮຸ້ນ ແລະ ທຶນຮຸ້ນຂອງ ລຣລ ໃນ 4 ໂຄງການ

| ໂຄງການ | ຜູ້ຖືຮຸ້ນ ແລະ ອັດສ່ວນການຖືຮຸ້ນ | ກໍາລັງຕິດຕັ້ງ (MW) | ການຜະລິດຕໍ່ປີ (GWh/Y) | ມູນຄ່າໂຄງການ (ລ້ານ USD) | ອັດສ່ວນເງິນກູ້ ຕໍ່ທຶນຮຸ້ນ (%) | ທຶນຮຸ້ນຂອງ ລຣລ (ລ້ານ USD) | ແຫຼ່ງທຶນຮຸ້ນຂອງ ລຣລ |
|---|---|---|---|---|---|---|---|
| ນໍ້າເທີນ 2 | EDFI (ຝຣັ່ງ): 40%<br>EGCO (ໄທ): 35%<br>**ລຣລ: 25%** | 1.080 | 5.936 | 1.297 | 72/28 | 112,50 | 1) ADB; 2) AFD; 3) IDA; 4) EIB;<br>5) ລັດຖະບານແຫ່ງ ສປປ ລາວ |
| ຫົງສາ | **ພາກໂຮງໄຟຟ້າ:**<br>BANPU (ໄທ): 40%<br>RH International (ສິງກະໂປ): 40%<br>**ລຣລ: 20%**<br>**ພາກບໍ່ແຮ່:**<br>BANPU (ໄທ): 37,50%<br>RH International (ສິງກະໂປ) 37,50%<br>**ລຣລ: 25%** | 1.878 | 12.200 | 3.710 | 75/25 | 220 | 1) ທະນາຄານກຸງໄທ (KTB)<br>2) ທະນາຄານອອມສິນ (GSB) |
| ເຊປຽນ-ເຊນໍ້ານ້ອຍ | SK (ເກົາຫຼີ): 26%<br>KOWEPO (ເກົາຫຼີ): 25%<br>RATCH (ໄທ): 25%<br>**ລຣລ: 24%** | 410 | 1.823 | 1.020 | 70/30 | 100,64 | 1) ທະນາຄານກຸງໄທ (KTB)<br>2) ກອງທຶນຮ່ວມມື ເພື່ອພັດທະນາດ້ານເສດຖະກິດ ສ. ເກົາຫຼີ (EDCF) |
| ນໍ້າງຽບ 1 | KPIC Netherland B.V. (Kansai) (ຍີ່ປຸ່ນ): 45%<br>EGAT Inter. (ໄທ): 30%<br>**ລຣລ: 25%** | 290 | 1.592 | 906 | 71/29 | 103,50 | 1) ທະນາຄານຍີ່ປຸ່ນເພື່ອການຮ່ວມມືສາກົນ (JBIC)<br>2) ທະນາຄານເພື່ອການນໍາເຂົ້າສົ່ງອອກປະເທດໄທ (Thai EXIM)<br>3) ທະນາຄານກຸງເທບ (Bangkok Bank) |
| **ລວມ** | | **3.658** | **21.551** | **6.933** | | **536,64** | |

ລຮລ ມີພາລະບົດບາດ ແລະ ໜ້າທີ່ຕົ້ນຕໍໃນການເຂົ້າຮ່ວມລົງທຶນກັບນັກລົງທຶນຕ່າງປະເທດ ເພື່ອພັດທະນາບັນດາໂຄງການໄຟຟ້າ ແລະ ຂົນຂວາຍແຫຼ່ງທຶນມາປະກອບເປັນເງິນຮຸ້ນຂອງຕົນໃນບັນດາໂຄງການດັ່ງກ່າວ, ຄຸ້ມຄອງບໍລິຫານໂຄງການຮ່ວມກັບບັນດາຂາຮຸ້ນ ໂດຍຜ່ານກອງປະຊຸມຜູ້ຖືຮຸ້ນ ແລະ ກອງປະຊຸມສະພາບໍລິຫານຂອງບໍລິສັດໂຄງການ (Project Company), ຄົ້ນຄວ້າປຶກສາຫາລືກ່ຽວກັບການພັດທະນາໂຄງການ ເພື່ອໃຫ້ສອດຄ່ອງກັບແຜນຍຸດທະສາດຂອງລັດຖະບານໃນການພັດທະນາເສດຖະກິດ-ສັງຄົມ ໂດຍໃຫ້ຖືກຕ້ອງຕາມສັນຍາຕ່າງໆທີ່ໄດ້ລົງນາມຮ່ວມກັບລັດຖະບານ, ຮັບປະກັນການລົງທຶນທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດ. ນອກຈາກນັ້ນ, ລຮລ ຍັງມີໜ້າທີ່ໃນການເຈລະຈາ ແລະ ບໍລິຫານບັນດາສັນຍາຕ່າງໆຂອງໂຄງການ ໂດຍສະເພາະແມ່ນສັນຍາຜູ້ຖືຮຸ້ນ ແລະ ສັນຍາຜູກພັນດ້ານການເງິນ, ຄຸ້ມຄອງບໍລິຫານໜີ້ເງິນກູ້ ແລະ ເງິນຮຸ້ນ, ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນ ໂດຍມີການກວດສອບຈາກບໍລິສັດກວດສອບພາຍນອກ ແລະ ການຕິດຕາມຈາກສະຖາບັນການເງິນສາກົນຢ່າງເປັນປະຈຳ, ລວມທັງອົງການກວດສອບແຫ່ງລັດ, ຕິດຕາມຄວາມຄືບໜ້າການກໍ່ສ້າງໂຄງການ, ການດຳເນີນການຜະລິດພະລັງງານໄຟຟ້າ ແລະ ການບຳລຸງຮັກສາເຂື່ອນ, ເຂົ້າຮ່ວມວຽກງານກວດສອບພາຍໃນກັບບັນດາຂາຮຸ້ນຕ່າງປະເທດ, ປະສານສົມທົບກັບບັນດາຂະແໜງການມະຫາພາກ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບໂຄງການ ໂດຍສະເພາະດ້ານສິ່ງແວດລ້ອມ-ສັງຄົມ ແລະ ການຍົກຍ້າຍຈັດສັນປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການ ແລະ ສະພາບການເຄື່ອນໄຫວທຸລະກິດຂອງ ລຮລ ໃຫ້ຂັ້ນເທິງໄດ້ຮັບຊາບໃນແຕ່ລະໄລຍະຢ່າງເປັນປົກກະຕິ. ການດຳເນີນທຸລະກິດຂາຍຂີ້ເທົ່າລອຍຈາກໂຄງການໄຟຟ້າຄວາມຮ້ອນຫົງສາຕາມການມອບໝາຍຂອງລັດຖະບານ.



## 2. ວິໃສທັດ

1. ລົງທຶນຢ່າງມີປະສິດທິຜົນ
Efficient Investment

2. ສ້າງຜົນກຳໄລໃຫ້ໄດ້ຫຼາຍ
Profit Making

3. ສ້າງຄວາມເຊື່ອຖືຈາກສະຖາບັນການເງິນສາກົນ ແລະ ຜູ້ສະໜອງທຶນ
Gaining Credibility

4. ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນຢ່າງຕໍ່ເນື່ອງ
Capacity Building

5. ບໍລິຫານລາຍຮັບ ແລະ ລາຍຈ່າຍຢ່າງໂປ່ງໃສ
Transparency in Management of Revenue and Expenditure

## 3. ນະໂຍບາຍລວມຂອງ ລຣລ

ລຣລ: ຕ້ອງເຕີບໃຫຍ່ເຂັ້ມແຂງ
ເພື່ອເປັນກຳລັງແຮງ ທຸລະກິດຂອງລັດ
ສ້າງລາຍຮັບໝັ້ນຄົງ ສ້າງກຳໄລຍືນຍົງ
ສົ່ງມອບລັດຖະບານ



## 4. ເຫດການເດັ່ນ

ການເຄື່ອນໄຫວວຽກງານຂອງ ລຮລ ໃນປີ 2018 ມີຫຼາຍເຫດການເດັ່ນດັ່ງນີ້:

ພິທີຮັບໃບຢັ້ງຢືນລະບົບບໍລິຫານຄຸນະພາບ ISO 9001:2015 ໂດຍບໍລິສັດ Global Group ຈາກປະເທດອັງກິດ, ວັນທີ 16/02/2018.




ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2017 ແລະ ທິດທາງແຜນການປີ 2018, ທີ່ຫໍປະຊຸມແຫ່ງຊາດ, ວັນທີ 28/02/2018.




ພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ປະຈຳປີ 2017 (ຄັ້ງທີ X), ວັນທີ 11/05/2018.




ພິທີກັກເກັບນ້ຳທີ່ເຂື່ອນໃຫຍ່ຂອງໂຄງການໄຟຟ້ານ້ຳງຽບ 1, ວັນທີ 25/05/2018.





ຊາວໜຸ່ມ ລຣລ ສົມທົບກັບຊາວໜຸ່ມຕະລຸມບອນກະຊວງພະລັງງານ ແລະ ບໍ່ແຮ່ ປະກອບສ່ວນຊ່ວຍເຫຼືອປະຊາຊົນທີ່ໄດ້ຮັບຜົນກະທົບຈາກເຫດການຄູກັ້ນນໍ້າໂຄງການໄຟຟ້າເຊປຽນ-ເຊນໍ້ານ້ອຍແຕກ ຢູ່ເມືອງສະໜາມໄຊ ແຂວງອັດຕະປື, ພາຍໃຕ້ການສະໜັບສະໜູນງົບປະມານຈາກ ລຣລ ຈຳນວນ 635.728.000 ກີບ.



ພະນະທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ພ້ອມດ້ວຍຄະນະໄປຢ້ຽມຢາມໂຄງການໄຟຟ້ານໍ້າເທີນ 2, ວັນທີ 02/08/2018.



ທ່ານ ປອ. ຄຳມະນີ ອິນທິລາດ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ໄປຢ້ຽມຢາມເຂື່ອນໄຟຟ້ານໍ້າເທີນ 2, ວັນທີ 07/10/2018.

ໃນປີ 2018 ລຣລ ໄດ້ເຊັນສັນຍາຊື້-ຂາຍຂີ້ເທົ່າລອຍຮ່ວມກັບ 4 ບໍລິສັດຄື:




ການເຊັນສັນຍາຊື້-ຂາຍຂີ້ເທົ່າລອຍກັບບໍລິສັດພັດທະນາກາວເສັ້ງລາວ-ບໍ່ເຕ່ນ ຈຳກັດ, ວັນທີ 13/03/2018.

ການເຊັນສັນຍາຊື້-ຂາຍຂີ້ເທົ່າລອຍກັບບໍລິສັດລາວ -ທົ່ງສຽງການຄ້າ, ການລົງທຶນນາໆຊາດ ຈຳກັດ, ວັນທີ 02/04/2018.



ການເຊັນສັນຍາຊື້-ຂາຍຂີ້ເທົ່າລອຍກັບບໍລິສັດ M-Fly ash Trading and Transport co., LTD ເພື່ອສະໜອງໃຫ້ບໍລິສັດຜະລິດຕະພັນວັດຖຸກໍ່ສ້າງ ຈຳກັດ ປະເທດໄທ, ວັນທີ 28/11/2018.



ການເຊັນສັນຍາຊື້-ຂາຍຂີ້ເທົ່າລອຍກັບບໍລິສັດ M-Fly ash Trading and Transport co., LTD ເພື່ອສະໜອງໃຫ້ບໍລິສັດປູນຊີເມັນນະຄອນຫຼວງຈຳກັດ ປະເທດໄທ, ວັນທີ 17/12/2018.



ສູນກາງສະຫະພັນກຳມະບານລາວ ແລະ ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ຮ່ວມເຮັດວຽກກັບ ລຮລ, ວັນທີ 17/09/2018.





ກອງປະຊຸມໃຫຍ່ຄັ້ງທີ III ຂອງໜ່ວຍສະຫະພັນແມ່ຍິງລັດວິສາຫະກິດຖືຮຸ້ນລາວ, ວັນທີ 20/12/2018.



ທ່ານລັດຖະມົນຕີພ້ອມດ້ວຍການນຳຂອງກະຊວງພະລັງງານ ແລະ ບໍ່ແຮ່ ໃຫ້ກຽດພົບປະ-ໂອ້ລົມກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງ ລຮລ, ວັນທີ 14/01/2019.

**ລາຍຮັບຂອງ ລຮລ ໃນປີ 2018**

**ທັງໝົດ 35.513.789 ໂດລາສະຫະລັດ**

1. ລາຍຮັບຈາກເງິນປັນຜົນ 33.854.311 ໂດລາສະຫະລັດ ໃນນັ້ນປະກອບມີ:
   - ໂຄງການໄຟຟ້ານ້ຳເທີນ 2 ຈຳນວນ 15.750.000 ໂດລາສະຫະລັດ.
   - ໂຄງການໄຟຟ້າຄວາມຮ້ອນຫົງສາ 18.104.311 ໂດລາສະຫະລັດ:
     - ພາກໄຟຟ້າ: 14.477.954 ໂດລາສະຫະລັດ.
     - ພາກບໍ່ແຮ່: 3.626.357 ໂດລາສະຫະລັດ.
2. ລາຍຮັບຈາກການຂາຍຂີ້ເທົ່າລອຍ 1.325.267 ໂດລາສະຫະລັດ.
3. ລາຍຮັບຈາກການສະໜອງບຸກຄະລາກອນໃຫ້ບໍລິສັດໂຄງການ 156.269 ໂດລາສະຫະລັດ.
4. ລາຍຮັບອື່ນໆ 177.942 ໂດລາສະຫະລັດ.



**ການມອບພັນທະໃຫ້ແກ່ລັດຖະບານ 3.364.794 ໂດລາສະຫະລັດ:**

1. ອາກອນເງິນປັນຜົນ 3.054.915
   - ໂຄງການໄຟຟ້ານໍ້າເທີນ 2 ຈຳນວນ 1.575.000 ໂດລາສະຫະລັດ.
   - ໂຄງການໄຟຟ້າຄວາມຮ້ອນຫົງສາ 1.479.915 ໂດລາສະຫະລັດ.
2. ອາກອນອື່ນໆ 309.879 ໂດລາສະຫະລັດ.



**ການຊຳລະຕົ້ນທຶນ ແລະ ດອກເບ້ຍ 34.683.581 ໂດລາສະຫະລັດ:**

1. ໂຄງການໄຟຟ້ານໍ້າເທີນ 2 ຈຳນວນ 5.805.935 ໂດລາສະຫະລັດ.
2. ໂຄງການໄຟຟ້າຄວາມຮ້ອນຫົງສາ 28.877.646 ໂດລາສະຫະລັດ.



## ການລົງທຶນ ແລະ ຜົນປະກອບການດ້ານທຸລະກິດ

ການເຄື່ອນໄຫວທຸລະກິດຂອງ ລຣລ ໃນປີ 2018 ແມ່ນປະສົບຜົນສຳເລັດດີສົມຄວນ, ລຣລ ມີລາຍຮັບທັງໝົດ 35.513.789 ໂດລາສະຫະລັດ, ການປະຕິບັດພັນທະຕາມກົດໝາຍ, ການປະກອບທຶນຮຸ້ນ ແລະ ການບໍລິຫານໜີ້ເງິນກູ້ສາມາດປະຕິບັດໄດ້ຢ່າງຄົບຖ້ວນ ແລະ ທັນເວລາ. ການດຳເນີນທຸລະກິດຂີ້ເທົ່າລອຍແມ່ນດີຂຶ້ນກວ່າປີ 2017 ແລະ ຄາດວ່າຈະສາມາດເພີ່ມຂຶ້ນໄດ້ຕາມລຳດັບໃນປີຕໍ່ໆໄປ. ນອກຈາກນັ້ນ, ລຣລ ຍັງໄດ້ຖອນເງິນກູ້ຢືມເພື່ອປະກອບເປັນທຶນຮຸ້ນ, ຊຳລະດອກເບ້ຍ ແລະ ຄ່າທຳນຽມຕ່າງໆໃນໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ແລະ ໂຄງການໄຟຟ້ານ້ຳງຽບ 1 ຈຳນວນ 24.626.805 ໂດລາສະຫະລັດ. ພ້ອມດຽວກັນນັ້ນ, ກໍໄດ້ຊຳລະໜີ້ເງິນກູ້ໃນໂຄງການໄຟຟ້ານ້ຳເທີນ 2 ແລະ ໂຄງການໄຟຟ້າຄວາມຮ້ອນຫົງສາ 34.683.581 ໂດລາສະຫະລັດ.

**ໂຄງການໄຟຟ້ານ້ຳເທີນ 2:** ລຣລ ໄດ້ຮັບເງິນປັນຜົນທັງໝົດ 15.750.000 ໂດລາສະຫະລັດ ລື່ນແຜນ 16,16%. ໄດ້ຈ່າຍອາກອນເງິນປັນຜົນ 1.575.000 ໂດລາສະຫະລັດ, ຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນຕາມສັນຍາກູ້ຢືມຕໍ່ 5.805.935 ໂດລາສະຫະລັດ.

**ໂຄງການໄຟຟ້າຄວາມຮ້ອນຫົງສາ:** ລຣລ ໄດ້ຮັບເງິນປັນຜົນທັງໝົດ 18.104.311 ໂດລາສະຫະລັດ, ຊຶ່ງໄດ້ຈາກພາກໂຮງໄຟຟ້າ 14.477.954 ໂດລາສະຫະລັດ ແລະ ພາກບໍ່ແຮ່ 3.626.357 ໂດລາສະຫະລັດ, ໄດ້ປະຕິບັດພັນທະຕ່າງໆໃຫ້ລັດຖະບານ 30.357.561 ໂດລາສະຫະລັດ. ໃນນັ້ນ, ມີອາກອນເງິນປັນຜົນ 1.479.915 ໂດລາສະຫະລັດ, ຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນຕາມສັນຍາກູ້ຢືມຕໍ່ 28.877.646 ໂດລາສະຫະລັດ.

**ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ:** ລຣລ ໄດ້ຖອນເງິນກູ້ ເພື່ອມາປະກອບເປັນທຶນຮຸ້ນ ແລະ ຈ່າຍຄ່າທຳນຽມຕ່າງໆຂອງເງິນກູ້ 11.597.900 ໂດລາສະຫະລັດ. ມາຮອດທ້າຍປີ 2018, ລຣລ ໄດ້ຖອນເງິນກູ້ທັງໝົດ 74.685.019 ໂດລາສະຫະລັດ, ໃນນັ້ນໄດ້ຖອນເງິນກູ້ຈາກທະນາຄານກຸງໄທ (KTB) 3.754.861 ໂດລາສະຫະລັດ ຂອງມູນຄ່າກູ້ຢືມທັງໝົດ 20 ລ້ານ ໂດລາສະຫະລັດ ແລະ ຖອນຈາກກອງທຶນຮ່ວມມື

**ເຂື່ອນໃຫຍ່ນາກາຍ**



**ໂຮງໄຟຟ້າ**



**ເຂື່ອນເຊນ້ຳນ້ອຍ**



ເພື່ອການພັດທະນາດ້ານເສດຖະກິດ (EDCF) ຈາກ ສ.ເກົາຫຼີ 70.930.158 ໂດລາສະຫະລັດ ຂອງມູນຄ່າກູ້ຢືມທັງໝົດ 80.800.000 ໂດລາສະຫະລັດ.

**ໂຄງການໄຟຟ້ານ້ຳງຽບ 1:** ລຮລ ໄດ້ຖອນເງິນກູ້ ເພື່ອມາປະກອບເປັນທຶນຮຸ້ນ ແລະ ຈ່າຍຄ່າທຳນຽມຕ່າງໆຂອງເງິນກູ້ 13.028.905 ໂດລາສະຫະລັດ. ມາຮອດທ້າຍປີ 2018, ລຮລ ໄດ້ຖອນເງິນກູ້ທັງໝົດ 72.905.754 ໂດລາສະຫະລັດ. ໃນນັ້ນ, ໄດ້ຖອນເງິນກູ້ຈາກທະນາຄານຍີ່ປຸ່ນ ເພື່ອການຮ່ວມມືສາກົນ (JBIC) ຈຳນວນ 26.381.000 ໂດລາສະຫະລັດ, ທະນາຄານເພື່ອການນຳເຂົ້າ-ສົ່ງອອກ ປະເທດໄທ (Thai EXIM Bank) 23.262.377 ໂດລາສະຫະລັດ ແລະ ທະນາຄານກຸງເທບ (BBL) 23.262.377 ໂດລາສະຫະລັດ ຂອງມູນຄ່າກູ້ຢືມທັງໝົດ 103,5 ລ້ານໂດລາສະຫະລັດ.

**ເຂື່ອນໃຫຍ່**



**ເຂື່ອນນ້ອຍ**



**ທຸລະກິດຂີ້ເທົ່າລອຍ:** ປະຈຸບັນ ລຮລ ມີສັນຍາຊື້-ຂາຍຂີ້ເທົ່າລອຍກັບ 8 ບໍລິສັດ. ໃນປີ 2018 ໄດ້ຂາຍຂີ້ເທົ່າລອຍທັງໝົດ 320.480 ໂຕນ ເປັນເງິນ 1.325.267 ໂດລາສະຫະລັດ.

**ລົດລູກຄ້າມາຮັບເອົາຂີ້ເທົ່າລອຍ**





## ກົງຈັກການຈັດຕັ້ງຂອງ ລຣລ

ລຣລ ມີສະພາບໍລິຫານ, ຄະນະອຳນວຍການ, ພະແນກບໍລິຫານ ແລະ ບັນຊີ-ການເງິນ, ພະແນກທຸລະກິດ-ແຜນການ, ພະແນກໂຄງການ, ພະແນກທຸລະກິດຊື້ເທົ່າລອຍ ແລະ ຫ້ອງການກວດສອບພາຍໃນ, ຕາມແຜນວາດຂ້າງລຸ່ມນີ້:



## ສະພາບໍລິຫານຂອງ ລຮລ

ສະພາບໍລິຫານປະກອບມີ 5 ທ່ານທີ່ຕາງໜ້າໃຫ້ຂະແໜງການກ່ຽວຂ້ອງຄື: ປະທານສະພາບໍລິຫານ ມາຈາກກະຊວງການເງິນ, ຮອງປະທານສະພາບໍລິຫານມາຈາກກະຊວງພະລັງງານ ແລະ ບໍ່ແຮ່, ກໍາມະການ ສະພາບໍລິຫານ 1 ທ່ານມາຈາກກະຊວງແຜນການ ແລະ ການລົງທຶນ ແລະ ຈາກ ລຮລ 2 ທ່ານ.



**ທ່ານ ນາງ ທິບພະກອນ ຈັນທະວົງສາ**
ປະທານສະພາບໍລິຫານ
ຮອງລັດຖະມົນຕີກະຊວງການເງິນ



**ທ່ານ ປອ ໄຊປະເສີດ ພົມສຸພາ**
ຮອງປະທານສະພາບໍລິຫານ
ຫົວໜ້າກົມທຸລະກິດພະລັງງານ ກະຊວງພະລັງງານ ແລະ ບໍ່ແຮ່



**ທ່ານ ນາງ ທໍາມາ ເພັດວິໄຊ**
ກໍາມະການ
ຫົວໜ້າຫ້ອງການກະຊວງແຜນການ ແລະ ການລົງທຶນ



**ທ່ານ ມານະສິນ ວົງໄຊ**
ກໍາມະການ
ຜູ້ອໍານວຍການ ລຮລ



**ທ່ານ ສົມສັກ ສີຊົມພູ**
ກໍາມະການ
ຕົວແທນພະນັກງານ ລຮລ




ໃນປີ 2018, ລຣລ ມີພະນັກງານທັງໝົດ 112 ຄົນ (ຍິງ 31 ຄົນ) ທຽບໃສ່ປີ 2017 ຫຼຸດລົງ 2 ຄົນ, ປະຈຳຢູ່ນະຄອນຫຼວງວຽງຈັນ 64 ຄົນ, 1 ຄົນ ເຮັດວຽກໃນຕຳແໜ່ງຄະນະບໍລິຫານບໍລິສັດໄຟຟ້າເຊປຽນ-ເຊນ້ຳນ້ອຍ, 8 ຄົນ ເປັນພະນັກງານຄຸ້ມຄອງ ແລະ ບັນຊາເຂື່ອນໄຟຟ້ານ້ຳເທີນ 2, ເຮັດວຽກກັບບໍລິສັດໄຟຟ້າຫົງສາ 4 ຄົນ ແລະ ປະຈຳການຢູ່ຫ້ອງການຂີ້ເທົ່າລອຍພາກສະໜາມຫົງສາ 35 ຄົນ.

**ການຂະຫຍາຍຕົວຂອງພະນັກງານ ລຣລ (ແຕ່ປີ 2005-2018)**



## ການຈັດຕັ້ງປະຕິບັດໂຄງການ

### 1. ໂຄງການໄຟຟ້ານ້ຳເທີນ 2

ໂຄງການໄຟຟ້ານ້ຳເທີນ 2 ຕັ້ງຢູ່ເມືອງນາກາຍ (ເຂື່ອນໃຫຍ່) ແລະ ເມືອງຍົມມະລາດ (ໂຮງຈັກໄຟຟ້າ) ແຂວງຄຳມ່ວນ, ລວມກຳລັງຕິດຕັ້ງທັງໝົດ 1.080 MW ແລະ ມີມູນຄ່າການກໍ່ສ້າງໂຄງການທັງໝົດ 1.297 ລ້ານໂດລາສະຫະລັດ. ໂຄງການໄດ້ສຳເລັດການກໍ່ສ້າງ ແລະ ເລີ່ມຜະລິດກະແສໄຟຟ້າຂາຍຢ່າງເປັນທາງການໃນເດືອນເມສາ 2010.

**ໂຮງຈັກໄຟຟ້າ**



ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ ປະກອບດ້ວຍ 3 ຂາຮຸ້ນຄື: ບໍລິສັດໄຟຟ້າຝຣັ່ງສາກົນ (EDFi), ບໍລິສັດຜະລິດໄຟຟ້າຈຳກັດມະຫາຊົນ (EGCO) ແລະ ລັດວິສາຫະກິດຖືຮຸ້ນລາວ.

**ບັນດາຂາຮຸ້ນໃນໂຄງການ**



ບໍລິສັດໂຄງການໄດ້ສືບຕໍ່ດຳເນີນການຜະລິດໄຟຟ້າ ແລະ ບຳລຸງຮັກສາເຄື່ອງຈັກຕາມແຜນການປີທີ່ກຳນົດໄວ້. ໃນປີ 2018 ຜະລິດໄຟຟ້າໄດ້ທັງໝົດ 6.415 ກິກາວັດໂມງ. ໃນນັ້ນຂາຍໃຫ້ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ (ກຟຜ) 6.114 ກິກາວັດໂມງ ລື່ນແຜນປີ 8,48% ເປັນເງິນ 256.659.881 ໂດລາສະຫະລັດ ແລະ ຂາຍໃຫ້ລັດວິສາຫະກິດໄຟຟ້າລາວ (ຟຟລ) 301 ກິກາວັດໂມງ ລື່ນແຜນປີ 0,33% ເປັນເງິນ 13.067.672 ໂດລາສະຫະລັດ.

**ພະລັງງານໄຟຟ້າຂາຍໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2010 ຫາ 2018)**




**ລາຍຮັບຈາກການຂາຍພະລັງງານໄຟຟ້າໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2010 ຫາ 2018)**



ໃນປີ 2018 ລັດຖະບານໄດ້ຮັບເງິນຄ່າພາກຫຼວງຈາກບໍລິສັດໄຟຟ້ານ້ຳເທີນ 2 ຈຳນວນ 5.482.026 ໂດລາສະຫະລັດ ແລະ 262.403.777 ບາດ ແລະ ອາກອນກຳໄລ 7.272.987 ໂດລາສະຫະລັດ.

## ລາຍຮັບຂອງລັດຖະບານຈາກຄ່າພາກຫຼວງ ແລະ ອາກອນກຳໄລ ໃນໂຄງການໄຟຟ້ານ້ຳເທີນ 2 (ແຕ່ປີ 2010 ຫາ 2018)




## ເຂື່ອນໃຫຍ່ນາກາຍ



## 2. ໂຄງການໄຟຟ້າຄວາມຮ້ອນຫົງສາ

ໂຄງການໄຟຟ້າຄວາມຮ້ອນຫົງສາ ຕັ້ງຢູ່ເມືອງຫົງສາ ແຂວງໄຊຍະບູລີ, ເປັນໂຄງການທີ່ຜະລິດໄຟຟ້າດ້ວຍຄວາມຮ້ອນ ໂດຍນຳໃຊ້ຖ່ານຫີນລິກໄນ (Lignite) ເປັນເຊື້ອໄຟ, ມີກຳລັງຕິດຕັ້ງ 1.878 MW ແລະ ມີມູນຄ່າກໍ່ສ້າງໂຄງການທັງໝົດແມ່ນ 3.710 ລ້ານໂດລາສະຫະລັດ.

**ໂຮງໄຟຟ້າ**



ບໍລິສັດໄຟຟ້າຫົງສາ ຈຳກັດ ປະກອບດ້ວຍ 3 ຂາຮຸ້ນຄື: ບໍລິສັດບ້ານປູ (BANPU) ປະເທດໄທ, ບໍລິສັດ ອາເອຊ ອິນເຕີເນຊັນແນວ (ສິງກະໂປ) ຄໍປໍເຣຊັນ ຈຳກັດ (RH International Singapore Corporation Pte, Ltd) ແລະ ລັດວິສາຫະກິດຖືຮຸ້ນລາວ.

### ບັນດາຂາຮຸ້ນໃນໂຄງການ



ບໍລິສັດໂຄງການໄດ້ດໍາເນີນການຜະລິດໄຟຟ້າ ແລະ ບໍາລຸງຮັກສາເຄື່ອງຈັກຕາມແຜນການທີ່ກໍານົດໄວ້. ໃນປີ 2018 ຜະລິດໄຟຟ້າໄດ້ 12.020 ກິກາວັດໂມງ, ໃນນັ້ນຂາຍໃຫ້ ກຟຜ 11.538 ກິກາວັດໂມງ, ຂາຍໃຫ້ ຟຟລ 482 ກິກາວັດໂມງ, ໂດຍໄດ້ນໍາໃຊ້ຖ່ານຫີນ 15.333.055 ໂຕນ ແລະ ຫີນປູນ 265.204 ໂຕນ.

**ພະລັງງານໄຟຟ້າທີ່ຂາຍໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2015 ຫາ 2018)**




ລາຍຮັບທີ່ໄດ້ຈາກການຂາຍໄຟຟ້າໃນປີ 2018 ແມ່ນ 703.823.909 ໂດລາສະຫະລັດ, ຊຶ່ງໄດ້ຈາກ ກຟຜ 673.823.487 ໂດລາສະຫະລັດ ແລະ ຈາກ ຟຟລ 30.000.422 ໂດລາສະຫະລັດ.

**ລາຍຮັບຈາກການຂາຍພະລັງງານໄຟຟ້າໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2015 ຫາ 2018)**



ໃນປີ 2018 ລັດຖະບານມີລາຍຮັບຈາກຄ່າທຳນຽມການນຳໃຊ້ແຮ່ທາດ 15.022.108 ໂດລາ ສະຫະລັດ.

**ລາຍຮັບຂອງລັດຖະບານຈາກຄ່າພາກຫຼວງ ແລະ ຄ່າທຳນຽມການນຳໃຊ້ແຮ່ທາດ**
**(ແຕ່ປີ 2015 ຫາ 2018)**




ນອກຈາກນັ້ນ, ບໍລິສັດໂຄງການຍັງໄດ້ສືບຕໍ່ເອົາໃຈໃສ່ວຽກງານການຝຶກອົບຮົມວິຊາຊີບ ແລະ ການສົ່ງເສີມການສ້າງລາຍຮັບໃຫ້ແກ່ປະຊາຊົນທີ່ໄດ້ຮັບກະທົບຈາກໂຄງການ, ຊຶ່ງໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້ານັບມື້ດີຂຶ້ນ. ພ້ອມກັນນັ້ນ, ກໍໄດ້ຮ່ວມກັບອຳນາດການປົກຄອງທ້ອງຖິ່ນສ້າງກິດຈະກຳຕ່າງໆ ແລະ ຕິດຕາມກວດກາມາດຕະຖານດ້ານສິ່ງແວດລ້ອມຢ່າງເປັນປະຈຳ ເພື່ອຮັບປະກັນໃຫ້ສອດຄ່ອງກັບຂໍ້ກຳນົດຕາມທີ່ໄດ້ລະບຸໄວ້ໃນສັນຍາສຳປະທານ.

ການກວດສຸຂະພາບໃຫ້ປະຊາຊົນ 7 ບ້ານ



ການປູກຕົ້ນໄມ້ຂອງບໍລິສັດໂຄງການຮ່ວມກັບປະຊາຊົນ



## 3. ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ

ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ຕັ້ງຢູ່ພາກໃຕ້ຂອງ ສປປ ລາວ, ເຂດຕິດຈອດລະຫວ່າງສອງແຂວງຄື: ແຂວງຈຳປາສັກ ແລະ ແຂວງອັດຕະປື ຊຶ່ງຕັນນ້ຳຈາກແມ່ນ້ຳສາມສາຍ ຄື: ເຊປຽນ, ເຊນ້ຳນ້ອຍ ແລະ ຫ້ວຍໝາກຈັບ ເພື່ອມາຮັບໃຊ້ການຜະລິດໄຟຟ້າ. ມີກຳລັງຕິດຕັ້ງທັງໝົດ 410 MW ແລະ ມີມູນຄ່າກໍ່ສ້າງໂຄງການທັງໝົດ 1.020 ລ້ານໂດລາສະຫະລັດ.

ເຂື່ອນເຊປຽນ



ເຂື່ອນເຊນ້ຳນ້ອຍ



ບໍລິສັດໄຟຟ້າເຊປຽນ-ເຊນ້ຳນ້ອຍຈຳກັດ (PNPC) ປະກອບມີ 4 ຂາຮຸ້ນຄື: ບໍລິສັດ SK Engineering and Construction Co., Ltd (SK E&C) ຈາກ ສ.ເກົາຫຼີ, ບໍລິສັດ KOREA WESTERN POWER Co., Ltd (KOWEPO) ຈາກ ສ.ເກົາຫຼີ, ບໍລິສັດຣາຊບູລີ (ປະເທດໄທ) ແລະ ລັດວິສາຫະກິດຖືຮຸ້ນລາວ.

### ບັນດາຂາຮຸ້ນໃນໂຄງການ




ໂຄງການໄດ້ຈັດຕັ້ງປະຕິບັດວຽກງານຢ່າງເອົາໃຈໃສ່ ເຖິງແມ່ນວ່າໄດ້ເກີດເຫດການຄູກັ້ນນ້ຳ D ແຕກໃນວັນທີ 23/07/2018, ຊຶ່ງສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນຢູ່ເມືອງສະໜາມໄຊ ແຂວງອັດຕະປື. ລຮລ ໃນນາມເປັນຂາຮຸ້ນໃນໂຄງການດັ່ງກ່າວ ກໍໄດ້ຮ່ວມກັບບັນດາຂາຮຸ້ນຕ່າງປະເທດ,

ບໍລິສັດໄຟຟ້າເຊປຽນ-ເຊນ້ຳນ້ອຍ, ໜ່ວຍງານຕ່າງໆທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ຢູ່ສູນກາງ ແລະ ທ້ອງຖິ່ນ ໄດ້ພ້ອມກັນສຸມໃສ່ກອບກູ້ ແລະ ຊ່ວຍເຫຼືອປະຊາຊົນຜູ້ປະສົບໄພໃນເຫດການດັ່ງກ່າວ ລວມທັງການຊົດເຊີຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບຈາກເຫດການທີ່ເກີດຂຶ້ນ.

**ເຮືອນພັກຊົ່ວຄາວຈຸດທີ 3 (ເຂດຕະມໍຢອດ)**



**ເຮືອນພັກຊົ່ວຄາວເຂດດອນບົກ**



**ມອບເງິນຊົດເຊີຍປົວແປງຈິດໃຈໃຫ້ຜູ້ປະສົບໄພ**



**ເຮື່ອນພັກຊົ່ວຄາວຈຸດທີ 2 (ເຂດດົງບາກ)**



ໃນຂະນະດຽວກັນທາງໂຄງການກໍໄດ້ສືບຕໍ່ການກໍ່ສ້າງໂຮງຈັກໄຟຟ້າ, ຄອງສົ່ງນ້ຳທ້າຍໂຮງຈັກ, ສະຖານີໄຟຟ້າ ແລະ ສາຍສົ່ງ. ມາຮອດທ້າຍປີ 2018 ການກໍ່ສ້າງແມ່ນປະຕິບັດໄດ້ 93,76% ຫຼຸດແຜນການທີ່ວາງໄວ້. ປະຈຸບັນ, ໂຄງການໄດ້ກະກຽມການກໍ່ສ້າງຄູກັ້ນນ້ຳ D ໃໝ່ ແລະ ໄດ້ເລື່ອນວັນຊື້-ຂາຍໄຟຟ້າຢ່າງເປັນທາງການ (COD) ຈາກເດືອນ 2/2019 ເປັນເດືອນ 12/2019.

**ໂຮງຈັກໄຟຟ້າ**



**ເຂື່ອນຫ້ວຍໝາກຈັບ**



ວຽກງານດ້ານສິ່ງແວດລ້ອມ ແລະ ສັງຄົມ: ໂຄງການໄດ້ແບ່ງປັນທີ່ດິນຈຳນວນ 261 ຮຕ ໃຫ້ປະຊາຊົນ ຈຳນວນ 213 ຫຼັງຄາເຮືອນທີ່ໄດ້ຮັບຜົນກະທົບຈາກການກໍ່ສ້າງ, ປະຈຸບັນມີ 151 ຫຼັງຄາເຮືອນໄດ້ເຂົ້າຈັບຈອງແລ້ວ. ພ້ອມກັນນັ້ນ, ໄດ້ຮ່ວມກັບຄະນະຮັບຜິດຊອບວຽກງານດັ່ງກ່າວ ແຂວງຈຳປາສັກໄດ້ສຳຫຼວດຄືນເນື້ອທີ່ດິນທີ່ຕົກຄ້າງຈາກການສຳຫຼວດໃນເບື້ອງຕົ້ນຢູ່ເຂດອ່າງເກັບນ້ຳຈຳນວນ 619 ຮຕ.

ການສັກ ແລະ ຢອດຢາກັນພະຍາດ



ດິນຈັດສັນໃຫ້ແກ່ປະຊາຊົນ



ຝຶກອົບຮົມເຕັກນິກການປູກກາເຟ



ການປູກເຂົ້າຂອງປະຊາຊົນ



ຝຶກອົບຮົມໃຫ້ສັດຕະວະແພດ



ຝຶກອົບຮົມວິທີການປະສົມພັນປາ



## 4. ໂຄງການໄຟຟ້ານ້ຳງຽບ 1

ໂຄງການໄຟຟ້ານ້ຳງຽບ 1 ຕັ້ງຢູ່ເມືອງບໍລິຄັນ, ແຂວງບໍລິຄຳໄຊ ຫ່າງຈາກທາງເລກທີ 13 ໃຕ້ ປະມານ 40 km, ມີກຳລັງຕິດຕັ້ງທັງໝົດ 290 MW ແລະ ມີມູນຄ່າກໍ່ສ້າງໂຄງການທັງໝົດແມ່ນ 906 ລ້ານໂດລາສະຫະລັດ. ບໍລິສັດໄຟຟ້ານ້ຳງຽບ 1 ຈຳກັດ (NNP1PC), ຊຶ່ງປະກອບດ້ວຍ 3 ຂາຮຸ້ນ ຄື: ບໍລິສັດ KPIC Netherlands B.V (Kansai), ບໍລິສັດ EGAT International ແລະ ລັດວິສາຫະກິດຖືຮຸ້ນລາວ.

### ບັນດາຂາຮຸ້ນໃນໂຄງການ




ການກໍ່ສ້າງໂຄງການແມ່ນມີຄວາມຄືບໜ້າດີ, ມາຮອດທ້າຍເດືອນ 12/2018 ການກໍ່ສ້າງໂຄງການປະຕິບັດໄດ້ 98%.

ສັນເຂື່ອນໃຫຍ່



ໂຮງຈັກໄຟຟ້າເຂື່ອນນ້ອຍ



ວຽກງານດ້ານສິ່ງແວດລ້ອມ-ສັງຄົມ: ໂຄງການໄດ້ສືບຕໍ່ຕິດຕາມ-ກວດກາຜົນກະທົບດ້ານສິ່ງແວດລ້ອມຈາກການກໍ່ສ້າງຢູ່ພາກສະໜາມເປັນປະຈຳ ເປັນຕົ້ນແມ່ນການຕິດຕາມກວດກາຄຸນະພາບນ້ຳ, ການກຳຈັດຂີ້ເຫຍື້ອ, ມົນລະພິດທາງອາກາດ, ມົນລະພິດທາງສຽງ ແລະ ອື່ນໆ. ການຍົກຍ້າຍຈັດສັນປະຊາຊົນທັງໝົດ 847 ຫຼັງຄາເຮືອນ ສຳເລັດແລ້ວ 100%, ໃນນັ້ນ ສຳເລັດຢູ່ເຂດທ້ອຍສູບ 94 ຫຼັງຄາເຮືອນ, ເຂດຄຸ້ມຫາດຊາຍຄຳ 38 ຫຼັງຄາເຮືອນ, ເຂດອ່າງເກັບນ້ຳຕອນເທິງໄດ້ສຳເລັດການຂຶ້ນບັນຊີຊັບສິນຂອງປະຊາ

ຊົນໃນເຂດຈະຖືກນ້ຳຖ້ວມ 236 ຫຼັງຄາເຮືອນ ແລະ ໄດ້ສຳເລັດການຊົດເຊີຍແລ້ວ 235 ຫຼັງຄາເຮືອນ, ເຂດອ່າງເກັບນ້ຳຕອນລຸ່ມມີທັງໝົດ 479 ຫຼັງຄາເຮືອນ ສຳເລັດການຊົດເຊີຍ 425 ຫຼັງຄາເຮືອນ. ການຍົກຍ້າຍປະຊາຊົນໃນ 4 ບ້ານ ຂອງເມືອງຮົ່ມ ແຂວງໄຊສົມບູນ ໄປຢູ່ເຂດຍົກຍ້າຍຈັດສັນຂອງໂຄງການແມ່ນສືບຕໍ່ກໍ່ສ້າງເຮືອນຢູ່ອາໄສ ແລະ ພື້ນຖານໂຄງລ່າງໃຫ້ແກ່ປະຊາຊົນ. ພ້ອມກັນນັ້ນ, ກໍ່ໄດ້ຊົດເຊີຍໃຫ້ແກ່ປະຊາຊົນຜູ້ທີ່ຖືກຜົນກະທົບໃນເຂດແລວສາຍສົ່ງ 230 kV ປະຕິບັດໄດ້ 453 ຫຼັງຄາເຮືອນ ເທົ່າກັບ 98,05%.

ບ້ານຈັດສັນເຂດພູໂຮມໄຊ



ການຝຶກອາຊີບໃຫ້ແກ່ປະຊາຊົນ



ການປູກຜັກຂອງປະຊາຊົນເຂດຍົກຍ້າຍຈັດສັນ



ການລ້ຽງປາກະຊັງຂອງປະຊາຊົນ



ການເຮັດປຸ໋ຍຊີວະພາບຂອງປະຊາຊົນ



ການກວດສຸຂະພາບໃຫ້ເດັກນ້ອຍ



## 5. ໂຄງການທຸລະກິດຂີ້ເທົ່າລອຍ

ປະຈຸບັນ ລຣລ ມີສັນຍາຊື້-ຂາຍຂີ້ເທົ່າລອຍກັບ 8 ບໍລິສັດຄື: ໂຮງງານຊີມັງໄຊຍະບູລີ, ບໍລິສັດວຽງແກ້ວ, ໂຮງງານປຸງແຕ່ງ ແລະ ປັບປຸງຄຸນະພາບເທົ່າລອຍ, ບໍລິສັດ M-Fly Ash, ບໍລິສັດວັດທະນາກິດຈະເລີນ, ບໍລິສັດຈິນຊີງຫາວຍູນການຄ້າ ຈໍາກັດ, ບໍລິສັດກາວເສີ້ງລາວບໍ່ເຕ່ນຈໍາກັດ ແລະ ບໍລິສັດລາວທົງສຽງການຄ້າສາກົນ ຈໍາກັດ.

ໃນປີ 2018 ລຣລ ຂາຍຂີ້ເທົ່າລອຍທັງໝົດ 320.480 ໂຕນ ເປັນເງິນ 1.325.267 ໂດລາສະຫະລັດ.

ສະຖານທີ່ຮັບຂີ້ເທົ່າລອຍ



ປ້ຳດູດຂີ້ເທົ່າລອຍຈາກເຮືອນຂຶ້ນສູ່ລົດ



ເຮືອຂົນສົ່ງຂີ້ເທົ່າລອຍຂອງລູກຄ້າ



ບໍລິສັດຊານເລີ້ ໂຮງງານຊີມັງລາວ ຂາອອກ-ຂາເຂົ້າ ຈໍາກັດ



## ການບໍລິຫານສັນຍາໂຄງການ

ການປະຕິບັດບັນດາສັນຍາໂຄງການທີ່ພົວພັນກັບ ລຣລ ໂດຍກົງແມ່ນເຮັດໄດ້ດີ ເປັນຕົ້ນແມ່ນສັນຍາດ້ານການເງິນເຊັ່ນ: ການຖອກເງິນຮຸ້ນເຂົ້າໃນການກໍ່ສ້າງໃນແຕ່ລະໂຄງການພ້ອມການຊໍາລະຄ່າທໍານຽມເງິນກູ້, ການປະຕິບັດສັນຍາຜູ້ຖືຮຸ້ນ ແລະ ສັນຍາອື່ນໆຕໍ່ຜູ້ສະໜອງເງິນກູ້, ຊຶ່ງສາມາດປະຕິບັດໄດ້ຢ່າງຄົບຖ້ວນ ແລະ ທັນຕາມແຜນເວລາທີ່ກໍານົດໄວ້. ໃນປີ 2018 ລຣລ ໄດ້ຊໍາລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ຢືມຕໍ່ຈາກກະຊວງການເງິນ 34.583.581 ໂດລາສະຫະລັດ. ນອກຈາກນີ້, ໄດ້ປະກອບທຶນຮຸ້ນ 19.404.257 ໂດລາສະຫະລັດ ແລະ ໄດ້ຈ່າຍຄ່າທໍານຽມຕ່າງໆ 4.865.911 ໂດລາສະຫະລັດ.

## ການຊຳລະຕົ້ນທຶນ ແລະ ດອກເບັ້ຍໃຫ້ກະຊວງການເງິນໃນໂຄງການໄຟຟ້ານ້ຳເທີນ 2




## ການຊຳລະຕົ້ນທຶນ ແລະ ດອກເບັ້ຍໃຫ້ກະຊວງການເງິນໃນໂຄງການໄຟຟ້າຫົງສາ



### ການຖອກທຶນຮຸ້ນ ແລະ ການຈ່າຍຄ່າທຳນຽມຕ່າງໆ




## ການປະຕິບັດພັນທະຕາມກົດໝາຍ

ໃນປີ 2018 ລຣລ ໄດ້ເອົາໃຈໃສ່ຢ່າງເຂັ້ມງວດໃນການປະຕິບັດພັນທະຕໍ່ລັດຖະບານຕາມກົດໝາຍ ແລະ ທັນຕາມກຳນົດເວລາເຊັ່ນ: ຈ່າຍອາກອນອື່ນໆ 2.643.887.628 ກີບ ຫຼືທຽບເທົ່າ 309.879 ໂດລາສະຫະລັດ ແລະ ຈ່າຍອາກອນເງິນປັນຜົນ 3.054.915 ໂດລາສະຫະລັດ. ລວມທັງໝົດ 3.364.794 ໂດລາສະຫະລັດ.

### ການປະຕິບັດພັນທະຕ່າງໆໃຫ້ແກ່ລັດຖະບານ



## ການບໍລິຫານລາຍຮັບ-ລາຍຈ່າຍ

ລຮລ ໄດ້ເອົາໃຈໃສ່ບໍລິຫານລາຍຮັບ-ລາຍຈ່າຍດ້ວຍຄວາມໂປ່ງໃສຕາມລະບຽບການຢ່າງເຂັ້ມງວດ, ໂດຍມີການກວດສອບຈາກຫ້ອງການກວດສອບພາຍໃນຂອງຕົນປະຈຳທຸກໆໄຕມາດ, ຖືກກວດສອບຈາກອົງການກວດສອບແຫ່ງລັດ ແລະ ຖືກກວດສອບໂດຍບໍລິສັດກວດສອບພາຍນອກ (PwC) ປະຈຳ 6 ເດືອນຕົ້ນປີ ແລະ ປະຈຳປີ ເພື່ອສົ່ງບົດລາຍງານທາງດ້ານການເງິນໃຫ້ແກ່ບັນດາທະນາຄານຜູ້ສະໜອງທຶນຕາມພັນທະສັນຍາ. ໃນປີ 2018 ລຮລ ມີລາຍຮັບທັງໝົດ 303.003.649.622 ກີບ ແລະ ມີລາຍຈ່າຍທັງໝົດ 226.663.110.835 ກີບ.

ສົມທຽບລາຍຮັບ-ລາຍຈ່າຍບໍລິຫານສະສົມຂອງ ລຮລ ແຕ່ປີ 2011 ເຖິງປີ 2018




## ການພັດທະນາບຸກຄະລາກອນ ແລະ ອົງກອນ

ລຮລ ໄດ້ຖືສຳຄັນການພັດທະນາລະດັບຄວາມຮູ້-ຄວາມສາມາດຂອງພະນັກງານ ໂດຍໄດ້ແນໃສ່ວຽກງານວິຊາສະເພາະທີ່ພົວພັນກັບທຸລະກິດຂອງຕົນ ໂດຍຜ່ານການຖ່າຍທອດຄວາມຮູ້ ແລະ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນດ້ວຍການຈັດຝຶກອົບຮົມພາຍໃນຢ່າງເປັນປະຈຳ. ພ້ອມດຽວກັນນັ້ນ ລຮລ ຍັງໄດ້ວ່າຈ້າງອາຈານຕ່າງປະເທດຈາກວິທະຍາໄລທຸລະກິດ ແລະ ການຄ້າລາວຈຳກັດຜູ້ດຽວ ເພື່ອສອນພາສາອັງກິດໄລຍະສັ້ນ ໃນຫຼັກສູດພາສາອັງກິດທຸລະກິດ ແລະ ພາສາອັງກິດທົ່ວໄປ (ມີຜູ້ເຂົ້າຮ່ວມຝຶກອົບຮົມ 22 ຄົນ), ສົ່ງພະນັກງານ 1 ຄົນໄປຍົກລະດັບພາສາອັງກິດ ທີ່ສະຖາບັນການຕ່າງປະເທດກະຊວງການຕ່າງປະເທດ, ຍົກລະດັບປະລິນຍາໂທພາຍໃນ 2 ຄົນ ແລະ ຕ່າງປະເທດ 2 ຄົນ (ສສ ຫວຽດນາມ

ແລະ ສປ ຈີນ). ນອກຈາກນັ້ນ, ລຮລ ກໍ່ໄດ້ສົ່ງພະນັກງານເຂົ້າຮ່ວມການສຳມະນາ ແລະ ຝຶກອົບຮົມນຳພາກສ່ວນອື່ນ. ຄຽງຄູ່ກັບວຽກງານພັດທະນາບຸກຄະລາກອນ ລຮລ ຍັງໄດ້ເອົາໃຈໃສ່ພັດທະນາອົງກອນຢ່າງຕໍ່ເນື່ອງ, ຊຶ່ງໄດ້ສືບຕໍ່ຈັດຕັ້ງປະຕິບັດລະບົບບໍລິຫານຄຸນະພາບຕາມມາດຕະຖານສາກົນ ISO 9001:2015.

ຝຶກອົບຮົມກ່ຽວກັບການຂັ້ນຕອນການພັດທະນາ ໂຄງການໄຟຟ້າພາກເອກະຊົນ



ການຝຶກອົບຮົມພາສາອັງກິດ ໄລຍະສັ້ນ



ການເຂົ້າຮ່ວມຝຶກອົບຮົມພາສາອັງກິດ ຢູ່ສະຖາບັນການຕ່າງປະເທດ




ການເຂົ້າຮ່ວມສຳມະນາຢູ່ ສປ ຈີນ



ການຝຶກອົບຮົມສີມືແຮງງານຂອງໜ່ວຍສະຫະພັນ ແມ່ຍິງ ລຮລ



ກອງປະຊຸມການຈັດຕັ້ງປະຕິບັດ ລະບົບບໍລິຫານ ຄຸນະພາບ ISO 9001:2015 ຂອງ ລຮລ



## ການປະກອບສ່ວນຊ່ວຍສັງຄົມ

ລຮລ ຍາມໃດກໍ່ໄດ້ເອົາໃຈໃສ່ໃນການປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມ ເປັນຕົ້ນແມ່ນການສົມທົບທຶນ, ມອບເປັນວັດຖຸອຸປະກອນການຮຽນ-ການສອນ, ທຶນການສຶກສາ, ມອບເຄື່ອງອຸປະໂພກ-ບໍລິໂພກໃຫ້ແກ່ອົງການຈັດຕັ້ງຕ່າງໆທັງພາກລັດ ແລະ ພາກເອກະຊົນຕາມຄວາມເໝາະສົມຕົວຈິງ ຈຳນວນ 36 ຄັ້ງ ເປັນເງິນທັງໝົດ 236.578.600 ກີບ.

ມອບອຸປະກອນການແພດ ແລະ ຢາປົວພະຍາດໃຫ້ສູນເສຍອົງຄະ 790



ມອບເງິນຊ່ວຍເຫຼືອສູນພັດທະນາ ແມ່ຍິງພິການລາວ



ມອບອຸປະກອນການສຶກສາ ໃຫ້ສະມາຄົມພັດທະນາໄວໜຸ່ມຜູ້ດ້ອຍໂອກາດ



ມອບຄອມພິວເຕີໃຫ້ວັດສີຊົມຊື່ນ ບ້ານໜອງບົວທອງເໜືອ



ພິເສດ ລຮລ ໄດ້ປະກອບສ່ວນດ້ານງົບປະມານເຂົ້າໃນການເຄື່ອນໄຫວຂອງຊາວໜຸ່ມຕະລຸມບອນກະຊວງພະລັງງານ ແລະ ບໍ່ແຮ່ ຈຳນວນ 5 ຄັ້ງ, ມີ 190 ເທື່ອຄົນ ເພື່ອຊ່ວຍເຫຼືອບັນເທົາທຸກໃນເຫດການໄພພິບັດຢູ່ ເມືອງສະໜາມໄຊ ແຂວງອັດຕະປື ເປັນເງິນທັງໝົດ 635.728.000 ກີບ.

**ມອບເງິນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ທີ່ເມືອງສະໜາມໄຊ ແຂວງອັດຕະປື**







**ຊາວໜຸ່ມ ລຣລ ສົມທົບກັບ ຊາວໜຸ່ມຕະລຸມບອນກະຊວງພະລັງງານ ແລະ ບໍ່ແຮ່ ປະກອບສ່ວນ ຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ທີ່ເມືອງສະໜາມໄຊ ແຂວງອັດຕະປື**





## ພາກສະຫຼຸບ

ການດຳເນີນທຸລະກິດໃນປີ 2018 ແມ່ນມີການເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໄດ້ຮັບຜົນສຳເລັດດີສົມຄວນເຊັ່ນ: ໂຄງການໄຟຟ້ານ້ຳເທີນ 2 ຜະລິດໄຟຟ້າໄດ້ 6.415 ກິກາວັດໂມງ. ໂຄງການໄຟຟ້າຄວາມຮ້ອນຫົງສາ ຜະລິດໄດ້ 12.020 ກິກາວັດໂມງ. ການກໍ່ສ້າງໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ປະຕິບັດໄດ້ 93,76% ແລະ ໂຄງການໄຟຟ້ານ້ຳງຽບ 1 ປະຕິບັດໄດ້ 98%. ລຣລ ມີລາຍຮັບທັງໝົດ 35.513.789 ໂດລາສະຫະລັດ. ລຣລ ໄດ້ເອົາໃຈໃສ່ໃນການຄຸ້ມຄອງ ແລະ ບໍລິຫານລາຍຮັບ-ລາຍຈ່າຍຂອງຕົນຢ່າງມີປະສິດທິຜົນ ແລະ ມີຄວາມໂປ່ງໃສ ໂດຍໄດ້ມີການກວດສອບຈາກພາຍໃນ-ພາຍນອກ. ຜົນສຳເລັດທັງໝົດທີ່ຍາດມາໄດ້ນັ້ນ ແມ່ນຍ້ອນການຊີ້ນຳ-ນຳພາຢ່າງໃກ້ຊິດຈາກການນຳຂອງກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ, ສະພາບໍລິຫານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ບວກກັບຄວາມບາກບັ່ນສູ້ຊົນ, ຄວາມບຸກບືນຫ້າວຫັນ ແລະ ຄວາມພະຍາຍາມຂອງຄະນະນຳ ລຣລ ທີ່ໄດ້ສຸມທຸກເຫື່ອແຮງ ແລະ ສະຕິປັນຍາໃນການນຳພາພະນັກງານ ລຣລ ທຸກຄົນຈັດຕັ້ງປະຕິບັດໜ້າທີ່ໆໄດ້ຮັບມອບໝາຍຈົນໄດ້ຮັບຜົນສຳເລັດຕະຫຼອດມາ. ລຣລ ຈະສືບຕໍ່ປະຕິບັດວຽກງານຕາມພາລະບົດບາດ-ໜ້າທີ່ຂອງຕົນໃຫ້ບັນລຸເປົ້າໝາຍຕາມແຜນການທີ່ໄດ້ວາງໄວ້ ແລະ ມີຜົນສຳເລັດອັນໃໝ່ ເພື່ອປະກອບສ່ວນສ້າງລາຍຮັບໃຫ້ແກ່ປະເທດຊາດນັບມື້ຫຼາຍຂຶ້ນ.






GlobalEnergy magazine Awards2011

Hydroelectric Power Project of the Year

Nam Theun 2, Laos

As voted by our readers

Global Energy Magazine Editor-in-chief Sarah O'Toole comments:

"Throughout 2010 and 2011, the Nam Theun 2 Power Project inLaosgained the respect of the global energy industry. Through hard work, rigour, compromise and sheer determination, coupled with paramount support from banks and multilateral agencies, the Nam Theun 2 management team realized t acclaimed power project. Representatives form over 100 different countries voted for Nam Theun 2 as being 'Hydroelectric Power Project of the Year' in Global Energy Magazine's 2011 awards programme. Our sincerest congratulations."


IJGlobal
Asia Pacific
Awards 2014
Asia Pacific Hydro
WINNER
Nam Ngiep 1


The President of
ASSOCIATION OTHERWAYS
MANAGEMENT & CONSULTING
PARIS - FRANCE
Certifies that
LHSE
LAO HOLDING STATE ENTERPRISE
has been selected to receive
The Majestic Falcon Award
for Quality & Excellence
28th November 2016
Dubai-U.A.E
The President,
Charbel S. Tabet
The Majestic Falcon Award for Quality & Excellence
OTHERWAYS
Dubai 2016

globalgroup
United Kingdom

## Certificate of Registration

*This is to certify that the*

**QUALITY MANAGEMENT SYSTEM**

*of*

**LAO HOLDING STATE ENTERPRISE**

Lane Xang Avenue, Hatsady Village, Chanthabouly District, P.O.Box 11536, Vientiane Capital, LAO P.D.R.

Ban Phonchanh, Hongsa District, Sayabouly Province, LAO P.D.R.

*for*

**Holding and Managing of Shares in Independent Power Producer (IPP) Projects and related Businesses. Sale and Distribution of Fly Ash.**

*has been assessed and registered against the provisions of*

**ISO 9001:2015**

*International Standard*

*with*

| | | | |
|---|---|---|---|
| Registration Number: | 63Q16125 | Project: | 56-16125-2-Q |
| Certification Date: | 10 January 2018 | Code: | K 74.15 |
| Recertification Due Date: | 15 December 2020 | | |
| Certification Approved By: | | Alan Cherry<br>Chairman | |

UKAS MANAGEMENT SYSTEMS 5965

Registration is subject to the management system being continually maintained to the above standard under regular surveillance. Should surveillance not take place when required, registration shall be removed.

This certificate is the property of Globalgroup of Companies Limited. 21 Lansdowne Crescent, Edinburgh, Midlothian, EH12 5EH, Scotland, United Kingdom.

Please validate the authenticity of the certificate at www.globalgroup.net

80003179



globalgroup
ISO 9001

UKAS
MANAGEMENT
SYSTEMS
5965

Cert No. 63Q16125



ISO 9001

UKAS MANAGEMENT SYSTEMS 5965

Cert No. 63Q16125


## ລັດວິສາຫະກິດຖືຮຸ້ນລາວ Lao Holding State Enterprise

ຖະໜົນລ້ານຊ້າງ, ບ້ານຫັດສະດີ, ເມືອງຈັນທະບູລີ, ຕູ້ໄປສະນີ 11536 ນະຄອນຫຼວງວຽງຈັນ, ສປປ ລາວ ໂທ: (+856-21) 263805; ແຟັກ: (+85621) 263804

Lane Xang Avenue, Chanthabouly, P.O Box 11536 Vientiane, Lao PDR, Tel:( +856-21) 263805; Fax: (+85621) 263804